ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 08 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 10. 1. 2013.

# ດຳລັດ
## ວ່າດ້ວຍການປະກາດໃຊ້
## ສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມ ການສະເໜີ ຂອງລັດຖະມົນຕີວ່າການກະຊວງການເງິນ, ສະບັບເລກທີ 3453/ກງ, ລົງວັນທີ 05 ທັນວາ 2012.

### ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 01: ລົບລ້າງສາລະບານອັດຕາພາສີລະບົບເອກະພາບ ລຸ້ນ 2007/1 ທີ່ປະກາດໃຊ້ໂດຍດຳລັດ ສະບັບເລກທີ 258/ນຍ, ລົງວັນ 28 ສິງຫາ 2009.

ມາດຕາ 02: ປະກາດໃຊ້ສາລະບານອັດຕາພາສີລະບົບເອກະພາບ ລຸ້ນ 2012 ຕາມປຶ້ມສາລະບານອັດຕາພາສີລະບົບເອກະພາບອາຊຽນ ເພື່ອປ່ຽນແທນສາລະບານອັດຕາພາສີລະບົບເອກະພາບ ລຸ້ນ 2007/1 ທີ່ປະກາດໃຊ້ໂດຍດຳລັດ ສະບັບເລກທີ 258/ນຍ, ລົງວັນ 28 ສິງຫາ 2009.

ມາດຕາ 03: ສາລະບານອັດຕາພາສີລະບົບເອກະພາບ ລຸ້ນ 2012 ປະກອບມີ 21 ພາກ ແລະ 97 ໝວດ, ສ່ວນໝວດທີ 77 ຍັງບໍ່ທັນໄດ້ນຳໃຊ້ ແລະ ສະຫງວນໄວ້ສຳລັບບາງປະເພດສິນຄ້າ ໃນຕໍ່ໜ້າ:

- ຫຼັກການໃນການຈຳແນກປະເພດສິນຄ້າ ແມ່ນກຳນົດໂດຍລະຫັດເຄົ້າ 04 ຕົວເລກ ແລະ ລະຫັດຍ່ອຍ 06 ຕົວເລກ ຂອງອົງການພາສີໂລກ (WCO) ເປັນພື້ນຖານ, ສ່ວນຕົວກຳນົດອັດຕາພາສີ ແມ່ນລະຫັດຍ່ອຍ 08 ຕົວເລກ ຂອງອາຊຽນ.
- ສາລະບານດັ່ງກ່າວ ປະກອບດ້ວຍລາຍການສິນຄ້າທັງໝົດ 9.558 ລາຍການ.

ມາດຕາ 04: ມອບໃຫ້ກະຊວງການເງິນອອກບົດແນະນຳລະອຽດ ກ່ຽວກັບການຕີຄວາມໝາຍຂອງແຕ່ລະລາຍການສິນຄ້າ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

ມາດຕາ 05: ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ